ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ແຂວງຄຳມ່ວນ

ເລກທີ 57 /ຈຂ

ຄຳມ່ວນ, ວັນທີ 20 ຕຸລາ 2025

# ຂໍ້ຕົກລົງ

## ວ່າດ້ວຍການກຳນົດເຂດປອດຄວັນຢາສູບ ຢູ່ພາຍໃນແຂວງຄຳມ່ວນ

- ອີງຕາມ ມາດຕາ 20, ຂໍ້ທີ 3 ຂອງກົດໝາຍວ່າດ້ວຍການປົກຄອງທ້ອງຖິ່ນແຫ່ງ ສປປ ລາວ, ສະບັບເລກທີ່ 75/ສພຊ, ລົງວັນທີ່ 20 ມີນາ 2025.
- ອີງຕາມ ກົດໝາຍ ວ່າດ້ວຍການສ້າງ ແລະ ປັບປຸງນິຕິກຳ, ເລກທີ 06/ສພຊ, ລົງວັນທີ່ 16 ພະຈິກ 2021.
- ອີງຕາມ ມະຕິ ຂອງສະພາປະຊາຊົນແຂວງ ການຮັບຮອງເອົາຂໍ້ຕົກລົງວ່າດ້ວຍ ການກຳນົດເຂດປອດຄວັນຢາສູບ ຢູ່ພາຍໃນແຂວງຄຳມ່ວນ, ສະບັບເລກທີ 37/ສພຂ.ຄມ, ລົງວັນທີ 28 ສິງຫາ 2025

### ເຈົ້າແຂວງ ຕົກລົງ:

### ໝວດທີ 1
### ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ກຳນົດຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການກຳນົດເຂດປອດຄວັນຢາສູບ ເພື່ອເຮັດໃຫ້ການຈັດຕັ້ງປະຕິບັດວຽກງານດັ່ງກ່າວ ມີປະສິດທິພາບ ແລະ ປະສິດທິຜົນ ແນໃສ່ຫຼຸດຜ່ອນການຊົມໃຊ້ຢາສູບ, ຄ່າໃຊ້ຈ່າຍທີ່ບໍ່ຈຳເປັນ, ຜົນຮ້າຍທີ່ເກີດຈາກການໄດ້ຮັບຄວັນຢາສູບ ແລະ ການໄດ້ຮັບຄວັນຢາສູບມືສອງ, ປົກປ້ອງ, ສົ່ງເສີມໃຫ້ພົນລະເມືອງ ມີສຸຂະພາບດີ ແລະ ປົກປັກຮັກສາສິ່ງແວດລ້ອມ, ປ້ອງກັນອັກຄີໄພ ປະກອບສ່ວນເຂົ້າໃນການປົກປັກຮັກສາ ແລະ ພັດທະນາແຂວງຄຳມ່ວນ.

**ມາດຕາ 2 ການກຳນົດເຂດປອດຄວັນຢາສູບ**

ການກຳນົດເຂດປອດຄວັນຢາສູບ ແມ່ນການກຳນົດສະຖານທີ່ຫ້າມສູບຢາ, ຫ້າມການຈູດກອກຢາປະໄວ້, ຕາມສະຖານທີ່ສາທາລະນະ, ສຳນັກງານ, ອົງການ, ຫ້ອງການ, ໂຮງໝໍ, ໂຮງຮຽນ, ໂຮງຈັກ, ໂຮງງານ ລວມທັງບ່ອນເຮັດວຽກອື່ນໆ ທັງພາກລັດ ແລະ ເອກະຊົນ ທົ່ວແຂວງຄຳມ່ວນ, ທີ່ໄດ້ກຳນົດເປັນເຂດປອດຄວັນຢາສູບແລ້ວນັ້ນ, ຕ້ອງປອດ ຫຼື ບໍ່ມີຄວັນຢາສູບຢ່າງເດັດຂາດ.

**ມາດຕາ 3 ການອະທິບາຍຄຳສັບ**

**ຄຳສັບທີ່ນຳໃຊ້ ໃນຂໍ້ຕົກລົງສະບັບນີ້ ມີຄວາມໝາຍ ດັ່ງນີ້ :**

1. ຢາສູບ ແມ່ນຜະລິດຕະພັນ ທີ່ຖືກປຸງແຕ່ງຈາກໃບຢາສູບທັງໝົດ ຫຼື ບາງສ່ວນ ທີ່ມີສານນິໂກຕິນເປັນສ່ວນປະກອບ ຊຶ່ງເປັນທາດເບື່ອ ແລະ ເປັນສິ່ງເສບຕິດ;
2. ຄວັນຢາສູບມືສອງ ໝາຍເຖິງ ຄວັນຢາສູບທີ່ພົ່ນອອກຈາກຜູ້ສູບຢາ ຫຼື ຄວັນອອກຈາກກອກຢາສູບທີ່ຈູດປະໄວ້;
3. ການໄດ້ຮັບຄວັນຢາສູບມືສອງ ໝາຍເຖິງ ຜູ້ບໍ່ສູບຢາ ໄດ້ຮັບຄວັນທີ່ພົ່ນອອກຈາກຜູ້ທີ່ສູບຢາ ຫຼື ຄວັນອອກຈາກກອກຢາສູບທີ່ຈູດປະໄວ້;
4. ສົ້ນ ຫຼື ກົກກອກຢາ ໝາຍເຖິງ ສິ່ງເສດເຫຼືອຈາກການສູບຢາ,ທັງຢາສູບອຸດສາຫະກຳ ແລະ ຢາສູບຫັດຖະກຳ ທີ່ຜູ້ສູບຖິ້ມເປັນບ່ອນ ຫຼື ຖິ້ມຊະຊາຍ, ບາງຄັ້ງອາດຍັງມີໄຟຍັງໃໝ້ຢູ່ ຫຼື ໄຟມອດແລ້ວ;

5. ພາຍໃນອາຄານ ໝາຍເຖິງ ສະຖານທີ່ ທີ່ມຸງດ້ວຍຫຼັງຄາ, ແອ້ມດ້ວຍຝາ ຫຼື ບໍ່ມີຝາຖາວອນ ລວມທັງລະບຽງ, ລິຟ, ຂັ້ນໄດ, ບ່ອນຮັບແຂກ, ອາຄານຕໍ່ເຕີມ, ຫ້ອງອາຫານ, ຫ້ອງນໍ້າ, ຫ້ອງນັ່ງຫຼິ້ນ, ເທີບ, ຕູບ ແລະ ອື່ນໆ.

ມາດຕາ 4 ນະໂຍບາຍ ຂອງລັດກ່ຽວກັບການກໍານົດເຂດປອດຄວັນຢາສູບ

ລັດໃຫ້ຄວາມສໍາຄັນ ແລະ ເອົາໃຈໃສ່ຕໍ່ວຽກງານ ການກໍານົດເຂດປອດຄວັນຢາສູບ ດ້ວຍການວາງນະໂຍບາຍ, ມາດຕະການຕ່າງໆ ເປັນຕົ້ນ ການກໍານົດສະຖານທີ່ຫ້າມບໍ່ໃຫ້ສູບຢາ ແລະ ສະຖານທີ່ອະນຸຍາດໃຫ້ສູບຢາ ພ້ອມທັງມາດຕະການຕ່າງໆ ຕໍ່ຜູ້ລະເມີດ.

ລັດສົ່ງເສີມການກໍານົດເຂດປອດຄວັນຢາສູບ ດ້ວຍການສ້າງ, ພັດທະນາ ແລະ ປະກອບບຸກຄະລາກອນ, ສະໜອງງົບປະມານ, ພາຫະນະ ແລະ ວັດຖຸປະກອນ ໃຫ້ແກ່ການເຄື່ອນໄຫວວຽກງານ ການກໍານົດເຂດປອດຄວັນຢາສູບ.

ລັດເອົາໃຈໃສ່ ໂຄສະນາ, ສຶກສາອົບຮົມໃຫ້ທົ່ວສັງຄົມ ດ້ວຍຫຼາຍຮູບການ ເພື່ອສ້າງຈິດສໍານຶກໃຫ້ເຫັນໄດ້ຜົນຮ້າຍຂອງການຊົມໃຊ້ຢາສູບ ແລະ ການໄດ້ຮັບຄວັນຢາສູບມືສອງ ດ້ວຍການສະໜອງຂໍ້ມູນຂ່າວສານທີ່ຖືກຕ້ອງຕາມຫຼັກການທາງດ້ານວິທະຍາສາດ ແລະ ຊຸກຍູ້ ສົ່ງເສີມ ບຸກຄົນ, ຄອບຄົວ, ການຈັດຕັ້ງທັງພາກລັດ ແລະ ເອກະຊົນໃຫ້ມີສ່ວນຮ່ວມໃນການຄວບຄຸມເຂດປອດຄວັນຢາສູບ.

ມາດຕາ 5 ຂອບເຂດການນໍາໃຊ້

ຂໍ້ຕົກລົງສະບັບນີ້ ນໍາໃຊ້ສໍາລັບ ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງທັງພາກລັດ ແລະ ເອກະຊົນ ພາຍໃນ ແລະ ຊາວຕ່າງປະເທດ ທີ່ພັກອາໄສ ແລະ ມາທ່ອງທ່ຽວຢູ່ແຂວງຄໍາມ່ວນ.

## ໝວດທີ 2
## ສະຖານທີ່ກໍານົດເຂດປອດຄວັນຢາສູບ

ມາດຕາ 6 ສະຖານທີ່ກໍານົດເຂດປອດຄວັນຢາສູບ

ສະຖານທີ່ກໍານົດເຂດປອດຄວັນຢາສູບ ມີດັ່ງນີ້ :

1. ສໍານັກງານຂອງລັດ ແລະ ເອກະຊົນ;
2. ພາຍໃນອາຄານຢູ່ໃນສະຖານີ ຫຼື ຄິວລົດໂດຍສານ, ທ່າເຮືອ ແລະ ສະຖານທີ່ສ່ວນລວມອື່ນໆ;
3. ສູນການຄ້າ, ໂຮງຈັກ-ໂຮງງານ, ຮ້ານສັບພະສິນຄ້າ, ມິນິມາກ, ຕະຫຼາດ ແລະ ຮ້ານຂາຍເຄື່ອງທົ່ວໄປ;
4. ພາຍໃນອາຄານຢູ່ໃນສະຖານທີ່ທ່ອງທ່ຽວ, ແລະ ສະຖານທີ່ ທີ່ມີຄົນຢູ່ກັນຫຼາຍຄົນຢ່າງແອອັດ ເຊັ່ນ: ພິທີລວມຊຸມນຸມທາງການ, ງານບຸນປະເພນີ, ເຮືອນດີ, ງານດອງ ແລະ ອື່ນໆ;
5. ເຮືອນພັກ, ໂຮງແຮມ, ຮ້ານອາຫານ, ຮ້ານກິນດື່ມ, ຮ້ານຄາລາໂອເກະ ແລະ ຮ້ານບັນເທີງ;
6. ຮ້ານນວດ, ສະປາ, ອົບຢາ, ຕັດຜົມ ແລະ ເສີມສວຍ;
7. ສະຖານທີ່ອື່ນ...

ເຈົ້າຂອງສໍານັກງານ, ອົງການ,ຫ້ອງການ,ໂຮງຮຽນ, ໂຮງໝໍ, ໂຮງຈັກ, ໂຮງງານ, ຮ້ານອາຫານ ລວມທັງບ່ອນເຮັດວຽກອື່ນໆ ທັງພາກລັດ ແລະ ເອກະຊົນ ຕ້ອງໄດ້ກໍານົດ ຫຼື ຈັດສັນສະຖານທີ່ ເປັນບ່ອນສູບຢາສະເພາະຢູ່ນອກອາຄານໂດຍຫ່າງຈາກຕົວອາຄານຢ່າງໜ້ອຍ ສິບແມັດ ຕ້ອງເປັນຫ້ອງສະເພາະທີ່ປິດແຈບ ແລະ ມີເຄື່ອງດູດອາກາດອອກນອກ ຫຼື ບ່ອນສູບຢາຢູ່ນອກອາຄານ (ກາງແປນ) ຢ່າງໜ້ອຍ ສິບແມັດ ໂດຍມີຖາດເຂ່ຍຂີ້ກອກຢາ ແລະ ຖັງມ້ຽນກົ້ນກອກຢາ, ພ້ອມທັງມີປ້າຍຕິດສະຕິກເກີເປັນພາສາລາວ : ບ່ອນສູບຢາ ແລະ ພາສາອັງກິດ : **Smoking Erea**.

ພາຍຫຼັງສູບຢາແລ້ວ ຕ້ອງກໍາຈັດກິ່ນປາກຈາກການສູບຢາ ດ້ວຍວິທີການບ້ວນປາກ ຫຼື ວິທີການອື່ນ.

ມາດຕາ 7 ເຄື່ອງໝາຍຫ້າມຢາສູບ

ລັກສະນະເຄື່ອງໝາຍ ຈະມີດັ່ງນີ້:

1. ປະກອບມີ 02 ພາສາ ຄື: ພາສາລາວ ແລະ ພາສາອັງກິດ;
2. ຮູບແບບເປັນວົງມົນສີແດງ, ມີຮູບກອກຢາທີ່ມີສີດໍາ ຫຼື ສີທີ່ແນມເຫັນຊັດເຈນໃນເຄິ່ງກາງວົງມົນ ພ້ອມທັງມີເສັ້ນສີແດງຜ່າຕັດວົງມົນທີ່ສະລຽງກາງ ແລະ ຢູ່ທາງຂ້າງເຄື່ອງໝາຍ ຂຽນເປັນພາສາລາວ ວ່າ " ຫ້າມສູບຢາ " ແລະ ພາສາອັງກິດ " NO Smoking ".

## ໝວດທີ 3
## ຂໍ້ຫ້າມ

**ມາດຕາ 8 ຂໍ້ຫ້າມທົ່ວໄປ**

ຫ້າມບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງມີພຶດຕິກຳ ດັ່ງນີ້:

- ຫ້າມສູບຢາ ຫຼື ຈູດກອກຢາໃນສະຖານທີ່ຫ້າມສູບຢາ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 6 ແລະ ມາດຕາ 7 ເທິງນີ້;
- ຫ້າມນິຕິບຸກຄົນ ຫຼື ອົງການຈັດຕັ້ງທັງພາກລັດ ແລະ ເອກະຊົນອະນຸຍາດໃຫ້ສູບຢາ ຫຼື ຈູດກອກຢາໃນສະຖານທີ່ຫ້າມສູບຢາ;
- ຫ້າມຊຸກຍູ້ ແລະ ສົ່ງເສີມບຸກຄົນອື່ນ ສູບຢາໃນສະຖານທີ່ຫ້າມສູບຢາ;
- ຫ້າມທຳລາຍກົດລະບຽບ ຫຼື ປ້າຍຫ້າມສູບຢາ.

**ມາດຕາ 9 ຂໍ້ຫ້າມສຳລັບພະນັກງານສາທາລະນະສຸກ ແລະ ພະນັກງານທີ່ກ່ຽວຂ້ອງ**

ຫ້າມພະນັກງານມີພຶດຕິກຳໃດໜຶ່ງດັ່ງນີ້:

- ຫ້າມເມີນເສີຍ, ປ່ອຍປະລະເລີຍໃຫ້ບຸກຄົນໃດໜຶ່ງສູບຢາ, ຈູດກອກຢາ ແລະ ຖິ້ມສົ້ນ ຫຼື ກົດກອກຢາໃນສະຖານທີ່ຫ້າມສູບຢາ;
- ຫ້າມສົ່ງເສີມ ຫຼື ສະໜັບສະໜູນການສູບຢາ ແລະ ຫ້າມໂຄສະນາຢາສູບໃນທຸກຮູບແບບ;
- ຫ້າມໃຊ້ຖານະຕຳແໜ່ງໃນການນາບຂູ່ ຫຼື ຊຸກຍູ້ສົ່ງເສີມການຄ້າ-ຂາຍຢາສູບ ເພື່ອຫາຜົນປະໂຫຍດສ່ວນຕົວ;
- ຫ້າມຮັບ ຫຼື ໃຫ້ສິນບົນ ເພື່ອອຳນວຍຄວາມສະດວກ ຊຸກຍູ້ ແລະ ສົ່ງເສີມໃນການຄ້າ-ຂາຍຢາສູບ.

## ໝວດທີ 4
## ການຄຸ້ມຄອງ ແລະ ການກວດກາ

**ມາດຕາ 10 ອົງການຄຸ້ມຄອງ**

ອົງການຄຸ້ມຄອງເຂດປອດຄວັນຢາສູບ ປະກອບມີ:

1. ພະແນກສາທາລະນະສຸກແຂວງ;
2. ຫ້ອງການສາທາລະນະສຸກເມືອງ;
3. ອົງການຈັດຕັ້ງພັກ-ລັດ, ເອກະຊົນ, ອົງການຈັດຕັ້ງສາກົນ, ອົງການຈັດຕັ້ງທາງສັງຄົມ ແລະ ອົງການຈັດຕັ້ງອື່ນ.

**ມາດຕາ 11 ສິດ ແລະ ໜ້າທີ່ ຂອງພະແນກສາທາລະນະສຸກແຂວງ**

ໃນການຄຸ້ມຄອງວຽກງານເຂດປອດຄວັນຢາສູບ ພະແນກສາທາລະນະສຸກແຂວງ ມີສິດ ແລະ ໜ້າທີ່ດັ່ງນີ້:

1. ອອກແຈ້ງການ ກ່ຽວກັບການຈັດຕັ້ງປະຕິບັດເຂດປອດຄວັນຢາສູບ;
2. ຈັດຕັ້ງ, ຜັນຂະຫຍາຍ ຂໍ້ຕົກລົງວ່າດ້ວຍການກຳນົດເຂດປອດຄວັນຢາສູບໃຫ້ເປັນ ແຜນການ, ແຜນງານ, ໂຄງການ ແລະ ກົດຈະກຳລະອຽດ ພ້ອມທັງຈັດຕັ້ງປະຕິບັດ;
3. ໂຄສະນາ ເຜີຍແຜ່ ຂໍ້ຕົກລົງສະບັບນີ້ໃຫ້ກວ້າງຂວາງ ແລະ ທົ່ວເຖິງ;
4. ຕິດຕາມ, ກວດກາ ຊຸກຍູ້ ແລະ ປະເມີນຜົນການຈັດຕັ້ງປະຕິບັດເຂດປອດຄວັນຢາສູບ ຢ່າງເປັນປົກກະຕິ ແລະ ຕໍ່ເນື່ອງ;
5. ສະໜັບສະໜູນການໃຫ້ຄຳແນະນຳ, ປຶກສາການອອກຢາສູບ, ການປິ່ນປົວ, ການບຳບັດ, ຮັກສາ ແລະ ການຟື້ນຟູສຸຂະພາບ ຂອງຜູ້ຊົມໃຊ້ຢາສູບ ທີ່ຕ້ອງການອອກຢາສູບ;
6. ຊີ້ນຳໃນການເຊື່ອມສານວຽກງານໃຫ້ຄຳແນະນຳ, ປຶກສາ ແລະ ຊ່ວຍເຫຼືອຜູ້ຕ້ອງການອອກຢາສູບ ທີ່ໂຮງໝໍແຂວງ;
7. ສະຫຼຸບ ແລະ ລາຍງານການຈັດຕັ້ງປະຕິບັດວຽກງານເຂດປອດຄວັນຢາສູບ ຕໍ່ ກະຊວງສາທາລະນະສຸກ ແລະ ອົງການປົກຄອງແຂວງ ຢ່າງເປັນປົກກະຕິ;
8. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

ມາດຕາ 12 ສິດ ແລະ ໜ້າທີ່ ຂອງຫ້ອງການສາທາລະນະສຸກເມືອງ

ໃນການຄຸ້ມຄອງເຂດປອດຄວັນຢາສູບ ຫ້ອງການສາທາລະນະສຸກເມືອງ ມີສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບ ຂອງຕົນດັ່ງນີ້:

1. ອອກແຈ້ງການ ກ່ຽວກັບການຈັດຕັ້ງປະຕິບັດເຂດປອດຄວັນຢາສູບ;
2. ຈັດຕັ້ງ, ຜັນຂະຫຍາຍຂໍ້ຕົກລົງວ່າດ້ວຍການກຳນົດເຂດປອດຄວັນຢາສູບ ພ້ອມທັງຈັດຕັ້ງປະຕິບັດ;
3. ໂຄສະນາ, ເຜີຍແຜ່ ຂໍ້ຕົກລົງສະບັບນີ້ ໃຫ້ກວ້າງຂວາງ ແລະ ທົ່ວເຖິງ;
4. ຕິດຕາມ, ກວດກາ ຊຸກຍູ້ ແລະ ປະເມີນຜົນການຈັດຕັ້ງປະຕິບັດເຂດປອດຄວັນຢາສູບ ຢ່າງເປັນປົກກະຕິຕໍ່ເນື່ອງ;
5. ສະໜັບສະໜູນການໃຫ້ຄຳແນະນຳ, ປຶກສາການອອກຢາສູບ, ການປິ່ນປົວ, ການບຳບັດ, ຮັກສາ ແລະ ການຟື້ນຟູສຸຂະພາບ ຂອງຜູ້ຊົມໃຊ້ຢາສູບ ທີ່ຕ້ອງການອອກຢາສູບ;
6. ຊີ້ນຳໃນການເຊື່ອມສານວຽກງານໃຫ້ຄຳແນະນຳ, ປຶກສາ ແລະ ຊ່ວຍເຫຼືອຜູ້ຕ້ອງການອອກຢາສູບ ທີ່ໂຮງເມືອງ;
7. ສະຫຼຸບ ແລະ ລາຍງານການຈັດຕັ້ງປະຕິບັດວຽກງານການກຳນົດເຂດປອດຄວັນຢາສູບ ຕໍ່ພະແນກສາທາລະນະສຸກແຂວງ ແລະ ອົງການປົກຄອງເມືອງ ຢ່າງເປັນປົກກະຕິ;
8. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

ມາດຕາ 13 ສິດ ແລະ ໜ້າທີ່ຂອງອົງການຈັດຕັ້ງພັກ-ລັດ, ເອກະຊົນ, ອົງການຈັດຕັ້ງສາກົນ, ອົງການຈັດຕັ້ງທາງສັງຄົມ ແລະ ອົງການຈັດຕັ້ງອື່ນ

1. ເຜີຍແຜ່ຕົກລົງວ່າດ້ວຍການກຳນົດເຂດປອດຄວັນຢາສູບ ໃນບຸກຄົນທີ່ຢູ່ໃນການຄຸ້ມຄອງໃຫ້ຮັບຮູ້ ແລະເຂົ້າໃຈຢ່າງເລິກເຊິ່ງ;
2. ຈັດຕັ້ງປະຕິບັດຂໍ້ຕົກລົງວ່າດ້ວຍການກຳນົດເຂດປອດຄວັນຢາສູບ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ ດ້ວຍການຕິດປ້າຍສະຕິກເກີ ເຂດຫ້າມສູບຢາແລະ ເຂດໃຫ້ສູບຢາ;
3. ນຳໃຊ້ມາດຕະການຕ່າງໆ ທີ່ໄດ້ກຳນົດໄວ້ຢູ່ໃນຂໍ້ຕົກລົງສະບັບນີ້.

ມາດຕາ 14 ອົງການກວດກາ

ອົງການກວດກາ ການຈັດຕັ້ງປະຕິບັດວຽກງານການກຳນົດເຂດປອດຄວັນຢາສູບ ປະກອບດ້ວຍ:

1. ອົງການກວດກາພາຍໃນ ຊຶ່ງແມ່ນ ອົງການດຽວກັນ ກັບອົງການຄຸ້ມຄອງ ທີ່ໄດ້ກຳນົດໄວ້ໃນມາດຕາ 10 ຂອງຂໍ້ຕົກລົງສະບັບນີ້;
2. ອົງການກວດກາພາຍນອກ ຊຶ່ງແມ່ນ ສະພາປະຊາຊົນຂັ້ນແຂວງ, ອົງການກວດກາແຂວງ, ແນວລາວສ້າງຊາດ.

ມາດຕາ 15 ເນື້ອໃນການກວດກາ ເຂດປອດຄວັນຢາສູບ

1. ການຈັດຕັ້ງຜັນຂະຫຍາຍ ຂໍ້ຕົກລົງການກຳນົດເຂດປອດຄວັນຢາສູບ;
2. ການປະຕິບັດໜ້າທີ່ຂອງພະນັກງານ-ລັດຖະກອນ ແລະ ທຸກພາກສ່ວນ;
3. ການສ້າງ ແລະ ປະຕິບັດແຜນການ, ແຜນງານ, ໂຄງການ ແລະ ກິດຈະກຳ ກ່ຽວກັບເຂດປອດຄວັນຢາຢາສູບ.

ມາດຕາ 16 ຮູບການການກວດກາ

ການກວດກາ ວຽກງານການກຳນົດເຂດປອດຄວັນຢາສູບ ມີ ສາມຮູບການດັ່ງນີ້:

1. ການກວດກາຕາມລະບົບປົກກະຕິ ຊຶ່ງແມ່ນ ການກວດກາທີ່ດຳເນີນໄປຕາມແຜນການ ຢ່າງເປັນປະຈຳ ແລະມີກຳນົດເວລາທີ່ແນ່ນອນ;
2. ການກວດກາໂດຍມີການແຈ້ງໃຫ້ຮູ້ລ່ວງໜ້າ ຊຶ່ງແມ່ນການກວດການອກແຜນການ ເມື່ອເຫັນວ່າມີຄວາມຈຳເປັນ ຊຶ່ງຕ້ອງແຈ້ງໃຫ້ຜູ້ຖືກກວດກາຮູ້ລ່ວງໜ້າ;
3. ການກວດກາແບບກະທັນຫັນ ຊຶ່ງແມ່ນການກວດກາແບບຮີບດ່ວນ ໂດຍບໍ່ໄດ້ແຈ້ງໃຫ້ຜູ້ຖືກກວດກາຮູ້ລ່ວງໜ້າ ໃນການດຳເນີນການກວດກາວຽກງານການກຳນົດເຂດປອດຄວັນຢາສູບ ຕ້ອງປະຕິບັດຕາມກົດໝາຍຢ່າງເຂັ້ມງວດ.

## ໝວດທີ 5
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 17 ນະໂຍບາຍຕໍ່ຜູ້ມີຜົນງານ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຜົນງານດີເດັ່ນໃນການປະຕິບັດຂໍ້ຕົກລົງສະບັບນີ້ ເປັນຕົ້ນ ການເປັນແບບຢ່າງ, ປະກອບສ່ວນ ຢ່າງຕັ້ງໜ້າເຂົ້າໃນການຈັດຕັ້ງປະຕິບັດວຽກງານການກຳນົດເຂດປອດຄວັນຢາສູບຈະໄດ້ຮັບການຍ້ອງຍໍ ຫຼື ນະໂຍບາຍອື່ນ ຕາມລະບຽບການ.

**ມາດຕາ 18 ມາດຕະການຕໍ່ຜູ້ລະເມີດ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ໄດ້ລະເມີດຂໍ້ຕົກລົງສະບັບນີ້ ເປັນຕົ້ນ ສູບຢາ ຫຼື ຈູດປະໄວ້ ໃນສະຖານທີ່ຫ້າມສູບຢາຕາມທີ່ໄດ້ກຳນົດໄວ້ໃນຂໍ້ຕົກລົງສະບັບນີ້ :

- **ຄັ້ງທີ່ 1:** ຈະຖືກກ່າວເຕືອນ, ສຶກສາອົບຮົມ ແລະ ເຮັດບົດບັນທຶກໄວ້;
- **ຄັ້ງທີ່ 2:** ຈະຖືກປັບໃໝເປັນເງິນ 500.000 ກີບ;
- **ຄັ້ງທີ່ 3:** ຈະຖືກປັບໃໝເປັນເງິນ 1.000.000 ກີບ. ພ້ອມທັງປະຕິບັດຕາມຂັ້ນຕອນ ຂອງລະບຽບ ແລະ ກົດໝາຍຖ້າຫາກກໍ່ລະນີມີຄວາມເສຍຫາຍ.

ເງິນທີ່ໄດ້ຈາກການປັບໃໝ ໃຫ້ພາກສ່ວນທີ່ຈັດຕັ້ງປະຕິບັດນຳໃຊ້ເຂົ້າໃນການຈັດຕັ້ງຜັນຂະຫຍາຍ ວຽກງານດັ່ງກ່າວໄດ້ຮັບໝາກຜົນກວ່າເກົ່າ.

## ໝວດທີ 6
## ບົດບັນຍັດສຸດທ້າຍ

**ມາດຕາ 19 ການຈັດຕັ້ງປະຕິບັດ**

ພະແນກສາທາລະນະສຸກແຂວງ ສົມທົບກັບ ອົງການຈັດຕັ້ງທັງພາກລັດ, ເອກະຊົນ ແລະ ອົງການຈັດຕັ້ງອື່ນ ຜັນຂະຫຍາຍຂໍ້ຕົກລົງສະບັບນີ້ ຢ່າງເຂັ້ມງວດ.

**ມາດຕາ 20 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ ແລະ ພາຍຫຼັງຈັດພິມເຜີຍແຜ່ທາງລັດຖະການສິບຫ້າວັນ.

**ເຈົ້າແຂວງ**

ແຂວງຄໍາມ່ວນ
ເຈົ້າແຂວງ

ວັນໄຊ ພອງສະຫວັນ